ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1036 /ອຄ.ສລທ

ນະຄອນຫຼວງວຽງຈັນ, ວັນທີ 28 MAY 2012

# ແຈ້ງການ

ເຖິງ : ພະແນກອຸດສາຫະກຳ ແລະ ການຄ້າແຂວງ , ນະຄອນຫຼວງ

ເລື່ອງ : ໃຫ້ໂຈະການຂຶ້ນທະບຽນວິສາຫະກິດ ໃຫ້ຜູ້ລົງທຶນຕ່າງປະເທດ ເພື່ອສ້າງຕັ້ງໂຮງງານປຸງແຕ່ງກາເຟ ໃນຂອບເຂດທົ່ວປະເທດ

- ອີງໃສ່ສະພາບການຂະຫຍາຍຕົວ ແລະ ການເຕີບໂຕທາງດ້ານທຸລະກິດ ການຜະລິດປຸງແຕ່ງກາເຟຢູ່ປະເທດເຮົາ ;
- ອີງຕາມການສະເໜີຂອງແຂວງ ແລະ ຫົວໜ່ວຍທຸລະກິດພາຍໃນທີ່ກ່ຽວຂ້ອງ.

ເພື່ອສົ່ງເສີມ ແລະ ພັດທະນາວິສາຫະກິດ ຫລື ໂຮງງານປຸງແຕ່ງກາເຟ ພາຍໃນທີ່ມີໜໍ່ແໜງການຜະລິດທີ່ຊັດເຈນ, ມີເຄື່ອງໝາຍການຄ້າ ຫລື ຍີ່ຫໍ້ສິນຄ້າ ທີ່ເປັນທີ່ຮູ້ຈັກຢ່າງກວ້າງຢູ່ທັງພາຍໃນ ແລະ ຕ່າງປະເທດ ໃຫ້ສາມາດດຳເນີນທຸລະກິດ ເຕີບໃຫຍ່ຂະຫຍາຍຕົວ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພະແນກອຸດສາຫະກຳ ແລະ ການຄ້າ ໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ໃຫ້ໂຈະການຂຶ້ນທະບຽນວິສາຫະກິດ ໃຫ້ຜູ້ລົງທຶນຕ່າງປະເທດ ເພື່ອສ້າງຕັ້ງໂຮງງານ ຫລື ການອະນຸຍາດໃດໆ ໃນໃບທະບຽນວິສາຫະກິດທີ່ກ່ຽວກັບກິດຈະການຜະລິດປຸງແຕ່ງກາເຟ ຈົນກວ່າຈະມີແຈ້ງການເປັນຢ່າງອື່ນ.

2. ການຂຶ້ນທະບຽນວິສາຫະກິດ ໃຫ້ຜູ້ລົງທຶນຕ່າງປະເທດ ໃນແຈ້ງການສະບັບນີ້ ໝາຍເຖິງການຂຶ້ນທະບຽນວິສາຫະກິດ ໃຫ້ຜູ້ລົງທຶນຕ່າງປະເທດ ເພື່ອສ້າງຕັ້ງ ແລະ ດຳເນີນທຸລະກິດຝ່າຍດຽວຮ້ອຍສ່ວນຮ້ອຍ.

3. ສຳລັບຜູ້ລົງທຶນຕ່າງປະເທດ ສາມາດປະກອບທຶນຮ່ວມກັບຜູ້ລົງທຶນຂອງຄົນລາວໄດ້ ແຕ່ຕ້ອງບໍ່ເກີນຊາວສ່ວນຮ້ອຍຂອງທຶນຈົດທະບຽນວິສາຫະກິດທັງໝົດ.

4. ການຂຶ້ນທະບຽນວິສາຫະກິດ ໃຫ້ນິຕິບຸກຄົນຕາມຂໍ້ສາມ ຖັດເທິງນີ້, ຫາກພາຍຫຼັງມາພົບວ່າ: ເປັນການຂຶ້ນທະບຽນວິສາຫະກິດ ທີ່ເກີດຈາກການສົມຮູ້ຮ່ວມຄິດ ສວຍໂອກາດຂອງຜູ້ລົງທຶນທີ່ເປັນຄົນລາວ ໂດຍທີ່ຜູ້ກ່ຽວບໍ່ໄດ້ປະກອບທຶນ ໃນອັດຕາສ່ວນແປດສິບສ່ວນຮ້ອຍ ຫລື ບໍ່ມີສ່ວນຮ່ວມຢ່າງເປັນເຈົ້າການໃນທຸລະກິດນັ້ນ ໃຫ້ຖືວ່າການອອກທະບຽນວິສາຫະກິດດັ່ງກ່າວ ເປັນໂມຄະ ແລະ ຈະຖືກສັ່ງໃຫ້ດຳເນີນການຍຸບເລີກວິສາຫະກິດ

ຕາມຂັ້ນຕອນຂອງກົດໝາຍວ່າດ້ວຍວິສາຫະກິດທັນທີ. ນອກຈາກນັ້ນ ຍັງຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 236 ຂອງກົດໝາຍວິສາຫະກິດ. ໃນກໍລະນີນີ້ ຜູ້ລົງທຶນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນຜູ້ລົງທຶນທີ່ເປັນຄົນລາວ ຕ້ອງ:

- ຮັບຜິດຊອບຕໍ່ໜ້າກົດໝາຍ ຖານແຈ້ງຂໍ້ມູນທີ່ບໍ່ເປັນຈິງຕໍ່ທາງລັດຖະການ ;
- ຮັບຜິດຊອບທຸກການກະທຳຂອງວິສາຫະກິດທີ່ກ່ຽວຂ້ອງ ຕໍ່ບຸກຄົນພາຍນອກ (ເຊັ່ນ: ໜີ້ສິນຕ່າງໆ).

5. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ຂອງບັນດາແຂວງ ປະສານກັບການປົກຄອງທ້ອງຖິ່ນຂອງຕົນ (ແຂວງ, ນະຄອນຫຼວງ) ແລະຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ(ຕາມສະພາບຄວາມເປັນຈິງຂອງທ້ອງຖິ່ນ) ວ່າ: ທຸລະກິດການຜະລິດພາຍໃນໃດ ທີ່ມີເງື່ອນໄຂ ທົ່ວແໜງການຜະລິດທີ່ເຂັ້ມແຂງແດ່ແລ້ວ ເຊັ່ນ ມີເຄື່ອງໝາຍການຄ້າ ຫລື ຍີ່ຫໍ້ສິນຄ້າມານານພໍສົມຄວນ ມີຄຸນນະພາບ ແລະ ສາມາດສະໜອງສິນຄ້າດັ່ງກ່າວ ຮັບໃຊ້ສັງຄົມໃນລາຄາ ແລະປະລິມານທີ່ໃກ້ຄຽງ, ເທົ່າ ຫລືດີກວ່າ ສິນຄ້າຊະນິດດຽວກັນຂອງຕ່າງປະເທດ ເພື່ອສະເໜີກະຊວງອຸດສາຫະກຳ ແລະການຄ້າ ພິຈາລະນາຕົກລົງອອກເປັນແຈ້ງການ ໃນກໍລະນີຈຳເປັນອາດຂໍການຕົກລົງຈາກລັດຖະບານ ຕາມຄວາມເໝາະສົມ.

6. ການຄົ້ນຄວ້າສະເໜີ ດັ່ງກ່າວ ຕ້ອງຕັ້ງຢູ່ບົນພື້ນຖານຫຼັກການ ດັ່ງນີ້ :

- ຕ້ອງບໍ່ແມ່ນວິສາຫະກິດ ໃນທຸລະກິດ ທີ່ມີແຕ່ຫົວໜ່ວຍດຽວ ຫລື ຈຳນວນໜຶ່ງ ທີ່ຕ້ອງການ ຫລືສົມຮູ້ຮ່ວມຄິດກັນ ເພື່ອເປົ້າໝາຍການຜູກຂາດຕະຫຼາດແຕ່ພຽງຜູ້ດຽວຢູ່ພາຍໃນປະເທດ ;
- ຕ້ອງມີຫຼັກປະກັນ ທີ່ພິສູດໄດ້ໃນທາງປະຕິບັດວ່າ ສາມາດສະໜອງສິນຄ້າດັ່ງກ່າວ ຮັບໃຊ້ສັງຄົມໃນຄຸນນະພາບ, ປະລິມານ ແລະ ລາຄາ ໃກ້ຄຽງ, ເທົ່າ ຫລື ດີກວ່າສິນຄ້າຊະນິດດຽວກັນຂອງຕ່າງປະເທດ ;
- ດີທີ່ສຸດ ແມ່ນເປັນສິນຄ້າທີ່ມີເຄື່ອງໝາຍການຄ້າ ຫລື ຍີ່ຫໍ້ສິນຄ້າມານານພໍສົມຄວນ ໄດ້ຈົດທະບຽນ ຕາມກົດໝາຍຊັບສິນທາງປັນຍາ ກໍຍິ່ງເປັນການດີ.

7. ໃນເວລາຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຫາກມີສະພາບ ຫລືບັນຫາໃດ ໃຫ້ລາຍງານກະຊວງອຸດສາຫະກຳ ແລະ ການຄ້າ ຊາບ ເພື່ອແກ້ໄຂ ຫລື ມີທິດຊີ້ນຳ ໂດຍໄວ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ກະຊວງອຸດສາຫະກຳແລະການຄ້າ
ລັດຖະມົນຕີ

ດຣ. ນາມ ວິຍະເກດ